ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0238 /ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 02 ກຸມພາ 2012

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍອາຍແກັສ ຢູ່ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 6 ເມສາ 2011;
- ອີງຕາມດຳລັດ ວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 7 ກໍລະກົດ 2009.

## ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍອາຍແກັສ ຢູ່ ສປປ ລາວ. ຂໍ້ຕົກລົງສະບັບນີ້ບໍ່ໄດ້ນຳໃຊ້ເພື່ອຈຸດປະສົງໃນການຈຳກັດປະລິມານ ຫຼື ມູນຄ່າໃນການນຳເຂົ້າ ແຕ່ເພື່ອຈຸດປະສົງໃນການເກັບກຳຂໍ້ມູນສະຖິຕິໃນການນຳເຂົ້ານ້ຳມັນເຊື້ອໄຟ, ໂດຍຜ່ານລະບອບການອອກໃບອະນຸຍາດນຳເຂົ້າແບບອັດຕະໂນມັດ.

**ມາດຕາ 2 ອະທິບາຍຄຳສັບ**

ໃນຂໍ້ຕົກລົງສະບັບນີ້ " ອາຍແກັສ " ໝາຍເຖິງ ອາຍແກັສທຸກຊະນິດ ປະກອບດ້ວຍ ອາຍແກັສຫຸງຕົ້ມ ແລະ ອາຍແກັສທີ່ໃຊ້ເຂົ້າໃນອຸດສາຫະກຳ ຊຶ່ງໄດ້ລະບຸໄວ້ ໃນໝວດລະຫັດເຄົ້າ 2711 ຂອງປຶ້ມສາລະບານອັດຕາພາສີຂອງ ສປປ ລາວ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ການນຳເຂົ້າ ແລະ ຈຳໜ່າຍອາຍແກັສ ຢູ່ ສປປ ລາວ.

## ໝວດທີ 2
## ສິດ ແລະ ເງື່ອນໄຂໃນການນຳເຂົ້າ ແລະ ຈຳໜ່າຍອາຍແກັສ

**ມາດຕາ 4 ສິດ ແລະ ເງື່ອນໄຂໃນການນຳເຂົ້າອາຍແກັສ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ມີສິດນຳເຂົ້າອາຍແກັສ ໂດຍປະຕິບັດຕາມ ລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 5 ສິດ ແລະ ເງື່ອນໄຂໃນການຈຳໜ່າຍອາຍແກັສ**

ຜູ້ທີ່ມີສິດຈຳໜ່າຍອາຍແກັສຢູ່ ສປປ ລາວ ຕ້ອງແມ່ນຜູ້ທີ່ຂຶ້ນທະບຽນວິສາຫະກິດຈຳໜ່າຍອາຍແກັສ ພາຍໃຕ້ກົດໝາຍຂອງ ສປປ ລາວ.

ວິສາຫະກິດຈຳໜ່າຍອາຍແກັສ ຕ້ອງປະຕິບັດຕາມ ເງື່ອນໄຂດັ່ງນີ້:

1. ຕ້ອງເປັນຕົວແທນຈຳໜ່າຍອາຍແກັສຂອງບໍລິສັດໃດໜຶ່ງ;
2. ຕ້ອງມີສາງເກັບອາຍແກັສ;
3. ຕ້ອງມີຫ້ອງຂາຍ ຫລື ປ້ຳບໍລິການລູກຄ້າ ແລະ ສິ່ງອຳນວຍຄວາມສະດວກຕ່າງໆໃນການບໍລິການ; ແລະ
4. ຕ້ອງມີລະບົບປ້ອງກັນຄວາມປອດໄພ.

## ໝວດທີ 3
## ລະບຽບການຂໍອະນຸຍາດນຳເຂົ້າອາຍແກັສ

**ມາດຕາ 6 ການຂໍອະນຸຍາດນຳເຂົ້າອາຍແກັສ**

ການນຳເຂົ້າອາຍແກັສ ຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າ ຈາກ ກົມການນຳເຂົ້າ ແລະ ສົ່ງອອກ ຫລື ໜ່ວຍງານທີ່ໄດ້ຮັບມອບໝາຍ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 7 ເອກະສານປະກອບຂໍອະນຸຍາດນຳເຂົ້າອາຍແກັສ**

ເອກະສານທີ່ຕ້ອງປະກອບເພື່ອຂໍອະນຸຍາດນຳເຂົ້າອາຍແກັສ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າອາຍແກັສ.
2. ສຳເນົາຂອງເອກະສານຕາມແຕ່ລະກໍລະນີ:
   - ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ ຢູ່ສປປ ລາວ); ຫຼື
   - ເອກະສານຂຶ້ນທະບຽນດຳເນີນທຸລະກິດ ອອກໃຫ້ໂດຍທາງການຂອງປະເທດກ່ຽວຂ້ອງ ທີ່ຖືກຕ້ອງຕາມລະບຽບກົດໝາຍ (ສຳລັບວິສາຫະກິດທີ່ບໍ່ຢູ່ ສປປ ລາວ).
3. ເອກະສານທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຈາກສຳນັກງານທະບຽນສານຂອງ ສປປ ລາວ.

**ມາດຕາ 8 ໃບອະນຸຍາດນຳເຂົ້າອາຍແກັສ**

ການອອກ, ການປ່ຽນແປງ ແລະ ອາຍຸ ຂອງໃບອະນຸຍາດນຳເຂົ້າອາຍແກັສ ໃຫ້ປະຕິບັດຕາມ ດຳລັດ 180/ນຍ ລົງວັນທີ 7 ມິຖຸນາ 2009 ວ່າດ້ວຍຂັ້ນຕອນການ ອອກໃບອະນຸຍາດນຳເຂົ້າສິນຄ້າ. ໃບອະນຸຍາດນຳເຂົ້າອາຍແກັສບໍ່ສາມາດໂອນໃຫ້ຜູ້ອື່ນໄດ້.

**ມາດຕາ 9 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການອອກ ແລະ ການປ່ຽນແປງ ຂອງໃບອະນຸຍາດນຳເຂົ້າອາຍແກັສ ແມ່ນໃຫ້ອີງຕາມລັດຖະບັນຍັດ ສະບັບເລກທີ 03/ປປທ ລົງວັນທີ 19 ພະຈິກ 2008 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 10 ການສະໜອງເອກະສານໃນເວລານຳເຂົ້າອາຍແກັສຕົວຈິງ**

ໃນເວລານຳເຂົ້າຕົວຈິງ, ຜູ້ນຳເຂົ້າຕ້ອງສະແດງເອກະສານດັ່ງຕໍ່ໄປນີ້ໃຫ້ແກ່ເຈົ້າໜ້າທີ່ພາສີ:

1. ໃບອະນຸຍາດນຳເຂົ້າອາຍແກັສທີ່ອອກພາຍໃຕ້ຂໍ້ຕົກລົງສະບັບນີ້; ແລະ
2. ເອກະສານອື່ນໆຕາມລະບຽບການທາງພາສີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ດຣ. ນາມ ວິຍະເກດ

ນຳສົ່ງ:

- ຫ້ອງວ່າການລັດຖະບານ;
- ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;
- ກົມພາສີ, ກະຊວງການເງິນ;
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ;
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.